**ໜ້າຂ່ອງ | http://www.wacaresfund.wa.gov/**

---

## WA CARES FUND

ຮັບປະກັນວ່າຄົນຣັດວໍຊິງຕັນທຸກໆຄົນມີການເຂົ້າເຖິງການປິ່ນປົວຣະຍະຍາວໃນຣາຄາຍ່ອມເບົາເມື່ອເວລາເຂົາເຈົ້າຕ້ອງການມັນ.

---

## ຂັ້ນຕອນຮັດຈານ

ສະພາຣັດວໍຊິງຕັນໄດ້ກໍ່ຕັ້ງຂຶ້ນມາສະວັດດີການປະກັນພັຍການປິ່ນປົວຣະຍະຍາວສຳລັບພະນັກງານທີ່ມີເງື່ອນໄຂໄດ້ຮັບທຸກໆຄົນເພື່ອຈະແກ້ໄຂພາວະເດືອດຮ້ອນໃນການປິ່ນປົວຣະຍະຍາວໃນອະນາຄົດ.

---

## ເປັນຫຍັງມັນຈຶ່ງສຳຄັນ

- **ການແກ້ໄຂຄວາມຕ້ອງການ**
  - 7 ໃນ 10 ຂອງຄົນຣັດວໍຊິງຕັນອາຍຸກາຍເກີນ 65 ປີຈະຕ້ອງການການບໍຣິການປິ່ນປົວຣະຍະຍາວແລະການອູ້ມຊູພາຍໃນຕະລອດຊີວິດຂອງເຂົາເຈົ້າ.
- **ການລຸດຜ່ອນພາລະຂອງຄອບຄົວໃຫ້ໜ້ອຍລົງ**
  - ຜູ້ເບິ່ງແຍງດູແລທີ່ເປັນຄອບຄົວຜູ້ທີ່ອອກຈາກກຸ່ມແຮງງານເພື່ອຈະເບິ່ງແຍງດູແລຄົນທີ່ເຂົາເຈົ້າຮັກຈະສູນເສັຽຣາຍໄດ້ຂອງເຂົາເຈົ້າເອງແລະສະວັດດີການສຸຂະພາບແລະບໍານານຂອງເຂົາເຈົ້າ.
- **ການເກັບຮັກສາເງິນອອມສິນຂອງທ່ານໄວ້**
  - ເພື່ອຈະຈ່າຍສຳລັບການປິ່ນປົວຣະຍະຍາວ,ຫລາຍໆຄົນຕ້ອງໄດ້ຈ່າຍເງິນອອມສິນຂອງເຂົາເຈົ້າລົງເພື່ອຈະມີສິດໄດ້ຮັບການອູ້ມຊູດ້ານການເງິນ.
- **ການມີຄວາມສະງົບໃນຈິດໃຈ**
  - ໂດຍການແບ່ງປັນຈຳນວນເງິນນ້ອຍໆຈາກເຊັກເບີກເງິນແຕ່ລະໃບໃນຂະນະທີ່ພວກເຮົາກຳລັງເຮັດວຽກຢູ່,ພວກເຮົາຫມົດທຸກຄົນຈະສາມາດຈ່າຍສຳລັບຄ່າປິ່ນປົວຣະຍະຍາວເມື່ອເວລາພວກເຮົາຕ້ອງການມັນ.

---

## ປະກັນພັຍການປິ່ນປົວຣະຍະຍາວ

ພາຍໃຕ້ກົດຫມາຍອັນນີ້,ບຸກຄົນຈະມີການເຂົ້າເຖິງຈຳນວນເງິນສະວັດດີການຕະລອດຊີວິດຊຶ່ງຈະ,ຖ້າຫາກວ່າເຂົາເຈົ້າຕ້ອງການມັນ,ເຂົາເຈົ້າສາມາດໃຊ້ໃສ່ການບໍຣິການປິ່ນປົວຣະຍະຍາວແລະການອູ້ມຊູກວ້າງຂວາງຫລາຍໆຢ່າງ.

---

ຮຽນຮູ້ເພີ້ມເຕີມກ່ຽວກັບ **WA Cares**

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.

Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ

Neve | ຖືກແລ່ນພະລັງໂດຍ WordPress

**ກ່ຽວກັບ WA Cares Fund | [http://www.wacaresfund.wa.gov/about-the-wa-cares-fund/](http://www.wacaresfund.wa.gov/about-the-wa-cares-fund/)**

---

## ກ່ຽວກັບ WA CARES FUND

ຣັດວໍຊິງຕັນເປັນຣັດທຳອິດຢູ່ໃນປະເທດທີ່ໄດ້ເຮັດອອກມາແນວທາງເພື່ອຈະເຮັດໃຫ້ການປິ່ນປົວຣະຍະຍາວສາມາດຈ່າຍໃຊ້ການໄດ້ສຳລັບພະນັກງານທຸກໆຄົນຢູ່ໃນຣັດເມື່ອເວລາພວກເຮົາອາຍຸແກ່ລົງໄປ.

The WA Cares Fund$^{SM}$ ເປັນເງິນທຶນໃຫມ່ຊຶ່ງພວກເຮົາທຸກໆຄົນຈະແບ່ງປັນຈ່າຍໃສ່ໃນຂະນະທີ່ພວກເຮົາກຳລັງເຮັດວຽກຢູ່, ແລະໄປຮອດເວລາພວກເຮົາສາມາດເຂົ້າເຖິງການປິ່ນປົວຣະຍະຍາວເມື່ອເວລາພວກເຮົາຕ້ອງການມັນ.

---

## ມັນຈະມີທົນທາງທີ່ດີກວ່າ.

- **ການແບ່ງບໍຣິຈາກ**
  - ເລີ້ມຕົ້ນແຕ່ເດືອນແຈນຢູຣີ 2022, ພະນັກງານຂອງຣັດວໍຊິງຕັນຈະຈ່າຍເງິນສູງເຖິງ $0.58 ຕໍ່ $100 ຂອງເງິນເຮັດວຽກເອົາ.
  - ພະນັກງານທຸກໆຄົນແບ່ງບໍຣິຈາກ – ນາຍຈ້າງບໍ່ເຮັດ.
  - ຖ້າຫາກວ່າທ່ານເຮັດວຽກໃຫ້ຕົນເອງ,ທ່ານສາມາດເລືອກຈ່າຍໄປໃສ່ເງິນສົມເຊື່ອ.
  - *ຮຽນຮູ້ກ່ຽວກັບການເບັ້ຽບຳນານ*
- **ສະວັດດີການ**
  - ເລີ້ມຕົ້ນແຕ່ເດືອນແຈນຢູຣີ 2025, ທຸກໆຄົນຜູ້ທີ່ມີເງື່ອນໄຂໄດ້ຮັບສະວັດດີການສາມາດເຂົ້າເຖິງການບໍຣິການແລະການອູ້ມຊູທີ່ມີຄ່າສູງເຖິງ $36,500.
  - *ຮຽນຮູ້ກ່ຽວກັບສະວັດດີການ*
- **ເງື່ອນໄຂຮັບເອົາ**
  - ເພື່ອຈະມີເງື່ອນໄຂໄດ້ຮັບສະວັດດີການ,ທ່ານຕ້ອງສອດຄ່ອງນຳຄຸນວຸດທິບາງຢ່າງ.
  - *ຮຽນຮູ້ກ່ຽວກັບເງື່ອນໄຂຮັບເອົາ*

---

## ເສັ້ນເວລາຂອງ LTSS TRUST ACT

- **2019**
  - ຜູ້ປົກຄອງຣັດ Inslee ໄດ້ເຊັນໃບ LTSS Trust Act ອອກມາເປັນກົດຫມາຍ (RCW 50B.04).
- **2022**

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

    - ຄົນຮັດວໍຊີງຕົນຜູ້ທີ່ກໍາລັງເຮັດວຽກຢູ່ເລີ້ມຕົ້ນຈ່າຍຄ່າທໍານຽມ
- **2025**
    - ສະວັດດີການເລີ້ມຕົ້ນສໍາລັບຜູ້ຮັບຜົນປະໂຍດທີ່ມີເງື່ອນໄຂໄດ້ຮັບ.

---

## ຊອກຮູ້ເພີ້ມເຕີມກ່ຽວກັບສະວັດດີການ.

[ພິມໃບຂ່າວ WHY WA CARES (PDF)]

**ເປັນຫຍັງຈຶ່ງ WA Cares? | http://www.wacaresfund.wa.gov/why-wa-cares/**

---

## ສະພາບການປັດຈຸບັນ

ການປິ່ນປົວຣະຍະຍາວແມ່ນແພງຫລາຍ,ມັນບໍ່ຖືກຄຸ້ມກັນໂດຍ Medicare ແລະພວກເຮົາສ່ວນຫລາຍແລ້ວຈະບໍ່ມີເງິນອອມສິນເພື່ອຈະຈ່າຍມັນ.ພວກເຮົາຈັດຄົນຢູ່ໃນ 10 ຄົນຈະຕ້ອງການການປິ່ນປົວຣະຍະຍາວໃນຣະຫວ່າງຕະລອດຊີວິດຂອງພວກເຮົາ, ແລະຜູ້ໃຫຍ່ຄົນແກ່ສ່ວນຫລາຍໃນວັນນີ້ສີ້ນສຸດດ້ວຍການຫວັງເພິ່ງສະມາຊິກຂອງຄອບຄົວເພື່ອຈະເບິ່ງແຍງດູແລເຂົາເຈົ້າຫລືເຮັດໃຫ້ເຂົາເຈົ້າທຸກລົງເອງເພື່ອຈະມີສິດໄດ້ຮັບ Medicaid.

- ແມ່ຂອງຂ້ອຍຢູ່ໃນອາຍຸຣະຫວ່າງ 80s ປີແລະມັກລົ້ມຢູ່ເລື້ອຍໆຢູ່ເຮືອນ.ດຽວນີ້ລາວມີກະດູກແຂນຫັກ.ລາວອາສັຍຢູ່ຄົນດຽວແລະບໍ່ມີຄອບຄົວຢູ່ໃນເມືອງເພື່ອຈະຊ່ວຍລາວ.
- ຂ້ອຍບໍ່ຢາກເປັນພາລະໃຫ້ລູກຜູ້ໃຫຍ່ຂອງຂ້ອຍ,ເຂົາເຈົ້າມີລູກຂອງເຂົາເຈົ້າເອງເພື່ອຈະເບິ່ງແຍງດູແລ.ແຕ່ວ່າຂ້ອຍມີບັນຫານໍາການເຂົ້າແລະອອກຈາກອ່າງອາບນໍ້າແລະຂ້ອຍຢ້ານກົວວ່າຂ້ອຍຈະລົ້ມ.
- ຂ້ອຍຢ້ານວ່າຄວາມຈໍາເຊື່ອມຂອງພໍ່ຂອງຂ້ອຍຈະຮ້າຍແຮງລົງໄປ.ລາວເອົາຖ້ວຍຊາມຢາງໃສ່ໃນເຕົາອົບແລະເກືອບຈູດເຮືອນຄົວຂອງລາວ.ລາວປະຕິເສດທີ່ຈະຍ້າຍໄປຢູ່ໂຮງຫມໍຫລືຈ້າງເອົາຄົນມາຊ່ວຍ.
- ພໍ່ຂອງຂ້ອຍຈະສາມາດໃຊ້ການເຕືອນໃຈໃຫ້ກິນຢາໄດ້ດີເພື່ອຈະຮັກສາປະຣິມານຂອງຢາອິນຊູລິນຂອງລາວກ່ອນທີ່ລາວຈະຈົບລົງໃນພາວະສຸກເສີນ,ແລະການສົ່ງອາຫານທີ່ມີພະລານາໄມເພື່ອຈະຮັກສາໃຫ້ຄວາມດັນເລືອດຂອງລາວຢູ່ຕໍ່າ.

ຕາມທີ່ພວກເຮົາຫລາຍໆຄົນຈອບເບິ່ງພໍ່ແມ່ຂອງພວກເຮົາແລະພໍ່ເຖົ້າແມ່ເຖົ້າຂອງພວກເຮົາອາຍຸແກ່ລົງໄປ,ພວກເຮົາເລີ້ມຈະສົງສັຍວ່າ, "ແມ່ນໃຜຈະເບິ່ງແຍງຂ້ອຍເມື່ອເວລາຂ້ອຍອາຍຸແກ່ແລະຂ້ອຍຈະຈ່າຍຄ່າມັນໄດ້ແນວໃດ?" WA Cares Fund ຈະເອົາທາງເລືອກໃຫ້ພວກເຮົາກ່ຽວກັບວ່າພວກເຮົາຢາກຈະໄດ້ຮັບການເບິ່ງແຍງດູແລແນວໃດເມື່ອເວລາພວກເຮົາອາຍຸແກ່ລົງໄປແລະຫົນທາງທີ່ຈະຈ່າຍຄ່າມັນ.

---

**WA CARES ສາມາດຊ່ວຍໄດ້.**

*ຊອກຮູ້ເພີ້ມເຕີມກ່ຽວກັບສະວັດດີການ*

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

---

## WA CARES ຈະມີຜົນປະໂຫຍດດີແນວໃດແດ່ໃຫ້ແກ່ພະນັກງານຮັບຈ້າງ

- **ມັນແມ່ນຣາຄາຍ່ອມເຍົາ**
  - WA Cares Fund ແມ່ນໂຄງການປະກັນພັຍການປິ່ນປົວຣະຍະຍາວໃນຣາຄາຍ່ອມເຍົາສຳລັບຄົນຮັບຈ້າງຕົນຜູ້ທີ່ກຳລັງເຮັດວຽກຢູ່ທຸກໆຄົນ.
- **ມັນສະເໜີທາງເລືອກໃຫ້**
  - WA Cares ເສີມພະລັງໃຫ້ພວກເຮົາເພື່ອຈະຄວບຄຸມວ່າພວກເຮົາຈະຮັບເອົາການປິ່ນປົວຣະຍະຍາວໄດ້ແນວໃດແລະຢູ່ໃສ.
- **ມັນເອົາຄວາມສະຫງົບໃນໃຈໃຫ້**
  - ພວກເຮົາບໍ່ຕ້ອງໄດ້ເປັນຫ່ວງຕໍ່ໄປອີກແລ້ວວ່າພວກເຮົາຈະກຸ້ມຄ່າການປິ່ນປົວຣະຍະຍາວໄດ້ແນວໃດເມື່ອພວກເຮົາອາຍຸແກ່ລົງໄປ.

---

## WA CARES ມີຜົນປະໂຫຍດດີ

ເລີ້ມຕົ້ນແຕ່ເດືອນແຈນຢູຣີ 2025, ທຸກໆຄົນຜູ້ທີ່ມີເງື່ອນໄຂໄດ້ຮັບສະວັດດີການສາມາດເຂົ້າເຖິງການບໍຣິການແລະການອູ້ມຊູທີ່ມີຄ່າສູງເຖິງ $36,500.

ມູນຄ່າຕົວຈິງຂອງສະວັດດີການອັນນີ້ຈະປ່ຽນແປງເມື່ອເວລາໄດ້ຜ່ານໄປ

---

## ການບໍຣິການແລະການອູ້ມຊູ

ສະວັດດີການຈະມີໄວ້ໃຫ້ເພື່ອຈະຖືກໃຊ້ສຳລັບການບໍຣິການແລະການອູ້ມຊູກວ້າງຂວາງຫລາຍຢ່າງ,ເຊັ່ນວ່າ:

- ການເບິ່ງແຍງດູແລສ່ວນຕົວຈາກຜູ້ຊ່ຽວຊານຢູ່ໃນເຮືອນຂອງທ່ານ,ສະຖານທີ່ອາສັຍຢູ່ທີ່ມີຄົນຊ່ວຍເຫລືອ,ເຮືອນຄອບຄົວຜູ້ໃຫຍ່ຫລືເຮືອນເບິ່ງແຍງຜູ້ເຖົ້າ

- ອຸບປະກອນປັບຕົວແລະເທັກໂນໂລຈີເຊັ່ນວ່າເຄື່ອງຊ່ວຍການຟັງສຽງແລະເຄື່ອງເຕືອນໃຈການກິນຢາ

- ການຕີຣາຄາເບິ່ງຄວາມປອດພັຍຢູ່ເຮືອນ

- ການຝຶກຝົນແລະການອູ້ມຊູສຳລັບສະມາຊິກຄອບຄົວຜູ້ທີ່ຖືກຈ່າຍເງິນໃຫ້ແລະບໍ່ຖືກຈ່າຍຜູ້ທີ່ໃຫ້ການເບິ່ງແຍງດູແລ

- ຄາບອາຫານສົ່ງຢູ່ຕາມເຮືອນ

- ການປະສານງານການຜັນປ່ຽນສຳນວນເອກສານ

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

- ການບົວລະບັດຄວາມຊົງຈໍາ
- ການດັດແປງຮູບຮ່າງຂອງສະພາບແວດລ້ອມເຊັ່ນວ່າທາງແລ່ນຂຶ້ນສໍາລັບຕັ່ງນັ່ງລໍ້ຊຸກ
- ລະບົບການຕອບໂຕ້ຍາມສຸກເສີນສ່ວນຕົວ
- ການພັກຜ່ອນຊົ່ວຄາວສໍາລັບຜູ້ເບິ່ງແຍງດູແລທີ່ເປັນສະມາຊິກຄອບຄົວ
- ຍານພາຫານະຂົນສົ່ງໄປມາ
- ການອູ້ມຊູຄວາມຊົງຈໍາ
- ການສຶກສາແລະການໃຫ້ຄໍາປຶກສາ

---

[ຮຽນຮູ້ກ່ຽວກັບເງື່ອນໄຂຮັບເອົາ]

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

## ການເຮັດວຽກເອົາສະວັດດີການຂອງທ່ານ | [http://www.wacaresfund.wa.gov/earning-your-benefits/](http://www.wacaresfund.wa.gov/earning-your-benefits/)

---

ສະວັດດີການ WA Cares ແມ່ນຖືກອອກເງິນທຶນໃຫ້ໂດຍທັງຫມົດໂດຍຄ່າທຳນຽມຂອງພະນັກງານ.

---

## ກົດກຳນົດຂອງການແບ່ງບໍລິຈາກ

ເພື່ອຈະມີສິດໄດ້ຮັບສະວັດດີການຈາກ WA Cares Fund, ທ່ານຕ້ອງໄດ້ເຮັດວຽກແລະແບ່ງບໍລິຈາກໄປໃສ່ເງິນທຶນສຳລັບ:

- ຢ່າງຫນ້ອຍສິບປີໃນຈຸດໃດຈຸດນຶ່ງຢູ່ໃນຊີວິດຂອງທ່ານໂດຍບໍ່ມີຊ່ອງຂາດວ່າງຫ້າປີຫລືຫລາຍກວ່າພາຍໃນສິບປີນັ້ນ,**ຫລື**
- ສາມປີຂອງຫົກປີຜ່ານມາໃນເວລາທີ່ທ່ານຮ້ອງຂໍເອົາສະວັດດີການ,**ແລະ**
- ຢ່າງຫນ້ອຍ 500 ຊົ່ວໂມງຕໍ່ປີໃນຣະຫວ່າງປີເຫລົ່ານັ້ນ.

ເພື່ອຣາຍຣະອຽດເພີ້ມເຕີມກ່ຽວກັບຄ່າທຳນຽມຂອງ WA Cares Fund, ຈົ່ງເບິ່ງ RCW 50B.04.080 ແລະ RCW 50B.04.085.

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

### ການຮ້ອງຂໍເອົາສະວັດດີການ | http://www.wacaresfund.wa.gov/applying-for-benefits/

---

ບຸກຄົນຜູ້ທີ່ມີຄວາມຕ້ອງການສໍາລັບການບໍລິການແລະການອູ້ມຊູຣະຍະຍາວຈະເລີ່ມຕົ້ນຮ້ອງຂໍເອົາສະວັດດີການໄດ້ໃນເດືອນແຈນ ຢູຣີ 2025. ເພື່ອຈະມີສິດໄດ້ຮັບສະວັດດີການ,ທ່ານຕ້ອງໄດ້ສອດຄ່ອງນໍາ WA Cares ກົດກໍານົດຂອງການແບ່ງບໍຣິຈາກ ກ່ອນເວລາທີ່ທ່ານຮ້ອງຂໍເອົາ.ທ່ານຍັງຈະຕ້ອງການຄວາມຊ່ວຍເຫລືອນໍາກິຈກັມຂອງ ການດໍາຣົງຊີວິດປະຈໍາວັນອີກດ້ວຍ.

---

## ກົດກໍານົດຂອງການຊ່ວຍເຫລືອ

ເພື່ອຈະມີເງື່ອນໄຂໄດ້ຮັບສະວັດດີການ,ທ່ານຕ້ອງການຄວາມຊ່ວຍເຫລືອນໍາຢ່າງໜ້ອຍໃນກິຈກັມຂອງການດໍາຣົງຊີວິດປະຈໍາວັນ ສາມຢ່າງ,ເຊັ່ນວ່າ:

- ການກໍາກັບເບິ່ງນໍາຢາ
- ການທໍາອະນາມັຍສ່ວນຕົວ
- ການກິນ
- ການເຂົ້າຫ້ອງນ້ໍາ
- ການທໍາງານຂອງຄວາມຊົງຈໍາ
- ຄວາມຊ່ວຍເຫລືອນໍາການຍົກຍ້າຍໄປມາ
- ການບົວຣະບັດຮ່າງກາຍ
- ການອາບນ້ໍາ
- ການຍ່າງໄປຍ່າງມາ/ການເຫນັງຕີງ
- ການນຸ່ງເຄື່ອງ

ທ່ານຕ້ອງມີອາຍຸຢ່າງໜ້ອຍ 18 ປີແລະເປັນຄົນອາສັຍຢູ່ຂອງຣັດວໍຊິງຕັນໃນປັດຈຸບັນເພື່ອຈະໄດ້ຮັບສະວັດດີການປິ່ນປົວຣະຍະຍາວ.

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

ການເລືອກທີ່ຈະເຂົ້ານຳຂອງຄົນເຮັດວຽກສ່ວນຕົວ | [http://www.wacaresfund.wa.gov/self-employed-opt-in/](http://www.wacaresfund.wa.gov/self-employed-opt-in/)

---

## ເຮັດວຽກສ່ວນຕົວບໍ່? ຈົດຊື່ຂອງທ່ານເອງໃສ່ສະວັດດີການ!

ຖ້າຫາກວ່າທ່ານເຮັດວຽກສ່ວນຕົວ,ທ່ານສາມາດເລືອກເອົາທີ່ຈະເຂົ້ານຳແລະປ້ອງກັນຕົວທ່ານເອງດ້ວຍສະວັດດີການໃນຣາຄາ ຍ່ອມເຍົາອັນດຽວກັນທີ່ມີໄວ້ໃຫ້ແກ່ພະນັກງານຂອງຣັດວໍຊິງຕັນຄົນອື່ນໆ.

---

## ໄດ້ຮັບຜົນປະໂຍດດີຂອງການເຂົ້ານຳ

### ຄວາມສາມາດຈ່າຍໄດ້

ຖ້າຫາກວ່າທ່ານເປັນຄົນຫາເງິນຈາກວຽກງານສ່ວນຕົວ, WA Cares ເປັນກຸນແຈຂອງທ່ານໄປສູ່ການຄຸ້ມກັນການປິ່ນປົວຣະຍະ ຍາວ.ການແບ່ງບໍຣິຈາກຂອງທ່ານຈະຕ່ຳເທົ່າກັນກັບພະນັກງານທົ່ວໄປ.ທ່ານຈະຈ່າຍອັດຕຣາຄ່າທຳນຽມປັດຈຸບັນ,ຊຶ່ງແມ່ນ 0.58 ເປີເຊັນ,ຂອງ:

- ຍອດເງິນຫາມາໄດ້ຂອງທ່ານ.
- ເງິນຄ່າແຮງງານທັງໝົດ,ຖ້າຫາກມີ,ຖືກຈ່າຍໃຫ້ທ່ານຈາກບໍຣິສັດການຄ້າຂອງທ່ານ.

ມັນຈະແມ່ນປະມານ $300 ຕໍ່ປີສຳລັບພະນັກງານຂອງຣັດວໍຊິງຕັນປານກາງ,ຕ່ຳກວ່າປະກັນພັຍເອກຊົນຫລາຍ.

### ຜົນປະໂຍດດີ

- ຄວາມສະງົບໃນໃຈ: ເມື່ອທ່ານໄດ້ລົງທຶນໄປແລ້ວ,ທ່ານຈະຖືກຮັບປະກັນໃສ່ການປິ່ນປົວຣະຍະຍາວສູງເຖິງ $36,500 ກວມເອົາຕະລອດຊີວິດຂອງທ່ານ.
- ຄວາມປອດພັຍທາງການເງິນ: ບໍ່ຄືກັນກັບ Medicaid, WA Cares ຈະບໍ່ເຮັດໃຫ້ທ່ານຈ່າຍເງິນອອມສິນ ຂອງທ່ານລົງກ່ອນທີ່ການຄຸ້ມກັນຈະເລີ້ມຕົ້ນ.
- ທາງເລືອກ: ທ່ານຕັດສິນໃຈວ່າຈະໃຊ້ສະວັດດີການຂອງທ່ານແນວໃດແລະຢູ່ໃສ.

### ເງື່ອນໄຂຮັບເອົາ

ຖ້າຫາກວ່າທ່ານມີເງິນຄ່າແຮງງານທີ່ມີສິດສຳລັບ [ເວລາພັກສຳລັບຄອບຄົວແລະການພະຍາບານທີ່ຖືກຈ່າຍເງິນໃຫ້](), ເວລານັ້ນຈະ ມີສິດໄດ້ຮັບອີກຄືກັນສຳລັບ WA Cares. ອີກຄຳນຶ່ງກໍແມ່ນ,ທ່ານມີເງື່ອນໄຂໄດ້ຮັບຖ້າຫາກວ່າທ່ານແມ່ນ:

- ເຈົ້າຂອງຄົນດຽວ.
- ຜູ້ລົງທຶນຮ່ວມກັນຫລືສະມາຊິກຂອງຫ້າງຫຸ້ນສ່ວນ.
- ສະມາຊິກຂອງບໍຣິສັດຮັບຜິດຊອບຈຳກັດ (LLC).
- ຜູ້ສັນຍາຮັບເໝົາບໍ່ຂຶ້ນນຳໃຜ. [ການຕີຄວາມໝາຍ]().

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

- ຫລືບໍ່ສະນັ້ນເຮັດກິຈການຄ້າໃຫ້ຕົນເອງ.

ເຈົ້າຫນ້າທີ່ຂອງບໍລິສັດບໍ່ແມ່ນເຮັດວຽກໃຫ້ຕົນເອງ.ເບິ່ງເວລາພັກຂອງຄອບຄົວແລະການພະຍາບານທີ່ຖືກຈ່າຍເງິນໃຫ້ ສູນກາງຊ່ວຍເຫລືອ ເພື່ອລາຍລະອຽດກ່ຽວກັບບໍລິສັດແລະ LLCs.

## ຮຽນຮູ້ເພີ້ມເຕີມ

### ຈະເລືອກເອົ້ານໍາໄດ້ແນວໃດ?

ທ່ານຈະເລືອກເອົ້ານໍາໂດຍໄວເທົ່າທີ່ຈະໄວໄດ້ທີ່ໃບຄໍາຮ້ອງຂໍມີໄວ້ໃຫ້ໃນເດືອນແຈນຢູຣີ 2022.

### ຕ້ອງການລາຍລະອຽດເພີ້ມເຕີມບໍ່?

ອີແມລ໌ໄປທີ່ wacaresfund@dshs.wa.gov ແລະສະມາຊິກຂອງທີມງານຂອງພວກເຮົາຢູ່ກົມ Employment Security Department ຈະຕິດຕາມນໍາທ່ານ.

**ຂ່າວດີ!** ພວກເຮົາຈະພ້ອມແລ້ວທີ່ຈະຕອບຄໍາຖາມຂອງທ່ານໂດຍທາງໂທລະສັບໃນປາຍລະດູຮ້ອນ.ພວກເຮົາຈະດັດແປງຫນ້ານີ້ໃຫມ່ເມື່ອເວລາການບໍລິການທາງໂທລະສັບຈະມີໄວ້ຮັບໃຊ້.

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

---

## ຈະຮູ້ຈັກໄດ້ຢ່າງໃດຖ້າຫາກວ່າການຍົກເວັ້ນແມ່ນເໝາະສົມສໍາລັບທ່ານ

### ມີແຜນການປິ່ນປົວຣະຍະຍາວໄວ້ແລ້ວບໍ່?

ພະນັກງານຜູ້ທີ່ກໍາປະກັນພັຍການປິ່ນປົວຣະຍະຍາວໃນປັດຈຸບັນຫລືຊື້ເອົານະໂຍບາຍເອກຊົນໃຫມ່ກ່ອນເດືອນໂນເວັມເບີ 1, 2021 ສາມາດຮ້ອງຂໍເອົາການຍົກເວັ້ນຈາກການຄຸ້ມກັນ WA Cares ໄດ້.ຖ້າຫາກຖືກອະນຸມັດ,ການຍົກເວັ້ນຂອງທ່ານຈະໝາຍຄວາມວ່າທ່ານຈະບໍ່ຖືກບັງໃຫ້ຈ່າຍຄ່າທໍານຽມແລະຈະບໍ່ຖືກລັດອອກຢ່າງຖາວອນຈາກສະວັດດີການ WA Care.

**ຈື່ໄວ້ໃນໃຈວ່າ,ຖ້າຫາກວ່າຄໍາຮ້ອງຂໍເອົາການຍົກເວັ້ນຂອງທ່ານຖືກອະນຸມັດ,ທ່ານຈະຖືກຕັດສິດຢ່າງຖາວອນໄປເລີຍຈາກ WA Cares.** ອັນນີ້ໝາຍຄວາມວ່າທ່ານຈະບໍ່ຈົດຊື່ເຂົ້າໃຫມ່ໄດ້ອີກຈັກເທື່ອແລະທ່ານຈະຖືກຫ້າມບໍ່ໃຫ້ໄດ້ຮັບສະວັດດີການ WA Cares, ເຖິງແມ່ນວ່າທ່ານຈະຕ້ອງການມັນ.

### ທາງເລືອກຂອງທ່ານແມ່ນຖາວອນ

ບໍ່ແນ່ໃຈວ່າທ່ານຢາກຈະສະລະສິດໃນສະວັດດີການ WA Cares ຂອງທ່ານ? ອັນນີ້ແມ່ນບາງສິ່ງບາງຢ່າງທີ່ຈະພິຈາຣະນາເບິ່ງ:

- ທ່ານຈ່າຍແຕ່ຄ່າທໍານຽມຂອງ WA Cares Fund ເທົ່ານັ້ນໃນຂະນະທີ່ທ່ານເຮັດວຽກຢູ່—ບໍ່ແມ່ນຫລັງຈາກເບັ້ຽບໍານານ.ປະກັນພັຍການປິ່ນປົວຣະຍະຍາວຂອງເອກຊົນຕາມປົກກະຕິແລ້ວຈະບັງໃຫ້ມີການຈ່າຍເງິນດໍາເນີນຕໍ່ໄປ. ຖ້າຫາກວ່າທ່ານບໍ່ປະຕິບັດຕາມຕະລອດ,ນະໂຍບາຍຂອງທ່ານສາມາດຂາດຕອນແລະເຮັດໃຫ້ທ່ານບໍ່ມີການຄຸ້ມກັນ. ບຸກຄົນທີ່ມີການຍົກເວັ້ນທີ່ຖືກອະນຸມັດແລ້ວຈະບໍ່ມີເງື່ອນໄຂໄດ້ຮັບສະວັດດີການ WA Care ຈັກເທື່ອ.
- ນະໂຍບາຍສໍາລັບກຸ່ມ,ຄືກັນກັບອັນທີ່ຖືກເອົາໃຫ້ໂດຍນາຍຈ້າງຂອງທ່ານ,ຄ້າຍຄືວ່າຈະບໍ່ຕິດຕາມທ່ານໄປຫານາຍຈ້າງບ່ອນຕໍ່ໄປຂອງທ່ານ. WA Cares ຈະເອົາການຄຸ້ມກັນໃຫ້ທ່ານນານເທົ່ານານທີ່ທ່ານເຮັດວຽກແລະອອກເບັ້ຽບໍານານຢູ່ໃນຣັດວໍຊິງຕັນ.
- ບໍ່ກ່ຽວກັບອາຍຸຫລືສະພາບສຸຂະພາບຂອງທ່ານ, WA Cares Fund ເອົາການຄຸ້ມກັນການປິ່ນປົວຣະຍະຍາວໃຫ້ໃນຣາຄາຍ່ອມເຍົາ.ອັດຕຣາປັດຈຸບັນສໍາລັບຄ່າທໍານຽມແມ່ນ 0.58 ເປີເຊັນເທົ່ານັ້ນຂອງເງິນຫາມາໄດ້ຂອງທ່ານ.
- ຫລັງຈາກທີ່ທ່ານລົງທຶນເຕັມທີ່ແລ້ວ,ສະວັດດີການ WA Cares ຂອງທ່ານຈະມີໄວ້ໃຫ້ເມື່ອທ່ານຕ້ອງການມັນ, ເຖິງແມ່ນວ່າມັນຈະແມ່ນ 20 ປີຫລືຫລາຍກວ່ານັ້ນຫລັງຈາກທ່ານອອກເບັ້ຽບໍານານແລ້ວກໍຕາມ. ຮຽນຮູ້ເພີ້ມເຕີມກ່ຽວກັບການລົງທຶນຖາວອນ.
- ທ່ານອາດຈະມີເງື່ອນໄຂໄດ້ຮັບສະວັດດີການເຖິງແມ່ນວ່າທ່ານຈະບໍ່ລົງທຶນຢ່າງຖາວອນກໍຕາມ. ຮຽນຮູ້ເພີ້ມເຕີມກ່ຽວກັບການລົງທຶນຊົ່ວຄາວ.
- ທ່ານສາມາດເພີ້ມເຕີມການຄຸ້ມກັນ WA Cares ຂອງທ່ານໄດ້ໃນທຸກໆເວລາ.ຖ້າຫາກວ່າທ່ານເລືອກທີ່ຈະຊື້ເອົາປະກັນພັຍການປິ່ນປົວຣະຍະຍາວເອກຊົນອີກຄືກັນ,ທ່ານຍັງຈະໄດ້ຮັບສະວັດດີການ WA Cares ຢູ່.
- WA Cares Fund ຈະອະນຸຍາດໃຫ້ທ່ານທີ່ຈະຈ່າຍເງິນຄືນໃຫ້ສະມາຊິກຄອບຄົວຜູ້ທີ່ມີສິດໄດ້ຮັບສໍາລັບການໃຫ້ການເບິ່ງແຍງດູແລຢູ່ໃນເຮືອນຂອງທ່ານເອງ,ລວມທັງຜົວເມັຽ. ຮຽນຮູ້ເພີ້ມເຕີມກ່ຽວກັບສະວັດດີການ WA Cares.

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

## ການຮ້ອງຂໍເອົາການຍົກເວັ້ນ

### ກົດກຳນົດ

ເພື່ອຈະຮ້ອງຂໍເອົາການຍົກເວັ້ນຖາວອນ,ທ່ານຕ້ອງ:

- ໄດ້ຊື້ເອົາໂຄງການປະກັນພັຍການປິ່ນປົວຣະຍະຍາວເອກຊົນທີ່ມີສິດກ່ອນເດືອນໂນເວັມເບີ 1, 2021. [ຮຽນຮູ້ເພີ້ມເຕີມກ່ຽວກັບໂຄງການມີສິດຢູ່ໃນແວບໄຊທ໌ຂອງ Office of the Insurance Commissioner].
- ມີອາຍຸຢ່າງໜ້ອຍ 18 ປີ.
- ຍື່ນຄຳຮ້ອງຂໍເອົາການຍົກເວັ້ນໄປຫາກົມ Employment Security Department (ESD). ຄຳຮ້ອງຂໍເອົາການຍົກເວັ້ນຈະມີໄວ້ໃຫ້ເລີ້ມຕົ້ນຕັ້ງແຕ່ເດືອນອົກໂຕເບີ 1, 2021.

**ESD ສາມາດຮັບເອົາຄຳຮ້ອງຂໍເອົາການຍົກເວັ້ນໄປຮອດເດືອນດີເຊັມເບີ 31, 2022 ເທົ່ານັ້ນ.**

### ຂັ້ນຕອນຕໍ່ໄປ

ESD ຈະກວດເບິ່ງຄຳຮ້ອງຂອງທ່ານຄືນແລະແຈ້ງບອກທ່ານຖ້າຫາກວ່າທ່ານມີເງື່ອນໄຂໄດ້ຮັບການຍົກເວັ້ນຈາກການຄຸ້ມກັນ WA Cares.

### ຖ້າຫາກວ່າຄຳຮ້ອງຂໍຂອງທ່ານຖືກອະນຸມັດ

ທ່ານຈະໄດ້ຮັບໜັງສືອະນຸມັດການຍົກເວັ້ນຈາກກົມ ESD, ຢູ່ໃນຈຸດໃດທ່ານຈະ:

- ຖືກໄລ່ອອກຈາກໂຄງການໂດຍບໍ່ມີທາງເລືອກທີ່ຈະຈົດຊື່ໃໝ່ອີກ.
- ຖືກຕັດສິນຈາກການເຂົ້າເຖິງສະວັດດີການ WA Cares ຕະລອດຊີວິດຂອງທ່ານ.
- ຖືກບັງໃຫ້ສະເໜີໜັງສືອະນຸມັດການຍົກເວັ້ນຂອງທ່ານໃຫ້ນາຍຈ້າງປັດຈຸບັນແລະອະນາຄົດທຸກໆບ່ອນ.ຖ້າຫາກວ່າທ່ານຜິດພາດທີ່ຈະສະເໜີໜັງສືອະນຸມັດຂອງ ESD ຂອງທ່ານ,ນາຍຈ້າງຈະກັກເອົາໄວ້ເງິນຄ່າທຳນຽມ WA Cares ທີ່ສົ່ງຄືນບໍ່ໄດ້.

ການຍົກເວັ້ນຈະມີຜົນບັງຄັບໃຊ້ໃນເທີມສາມເດືອນຫລັງຈາກທີ່ຄຳຮ້ອງຂໍຂອງທ່ານຖືກອະນຸມັດ.

---

## ຮຽນຮູ້ເພີ້ມເຕີມ

### ຕ້ອງການລາຍລະອຽດເພີ້ມເຕີມບໍ່?

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

ອີເມລ໌ໄປທີ່ wacaresfund@dshs.wa.gov ແລະສະມາຊິກຂອງທີມງານຂອງພວກເຮົາຢູ່ກົມ Employment Security Department ຈະຕິດຕາມນຳທ່ານ.

**ຂ່າວດີ!** ພວກເຮົາຈະພ້ອມແລ້ວທີ່ຈະຕອບຄຳຖາມຂອງທ່ານໂດຍທາງໂທຣະສັບໃນປາຍຣະດູຮ້ອນ.ພວກເຮົາຈະດັດແປງໜ້ານີ້ໃໝ່ເມື່ອເວລາການບໍຣິການທາງໂທຣະສັບຈະມີໄວ້ຮັບໃຊ້.

**ລາຍຣະອຽດກ່ຽວກັບນາຍຈ້າງ | http://www.wacaresfund.wa.gov/employers/**

---

ການຮູ້ຈັກວ່າມັນມີເງິນແບ່ງໄວ້ທາງຂ້າງສຳລັບການປິ່ນປົວໃນອະນາຄົດຈະເອົາຄວາມສະງົບໃນໃຈໃຫ້ພະນັກງານຂອງທ່ານໃນວັນນີ້.WA Cares Fund ເຮັດໃຫ້ມີການຄຸ້ມກັນການປິ່ນປົວຣະຍະຍາວໃນຣາຄາຍ່ອມເຍົາມີໄວ້ໃຫ້ແກ່ພະນັກງານຂອງຣັດວໍຊິງຕັນທຸກໆຄົນ.

---

## ຄວາມຮັບຜິດຊອບຂອງນາຍຈ້າງ

### ການເກັບເອົາຄ່າທຳນຽມ

ໃນຖານະເປັນນາຍຈ້າງຂອງຣັດວໍຊິງຕັນ,ທ່ານໄດ້ຖືກບົ່ງໃຫ້ລາຍງານເງິນຄ່າແຮງງານແລະຊົ່ວໂມງຂອງພະນັກງານຂອງທ່ານແລະຈ່າຍຄ່າທຳນຽມທຸກໆເທີມສາມເດືອນ—ນອກຈາກວ່າທ່ານບໍ່ມີລາຍຈ່າຍບັນຊີເງິນເດືອນໃນຣະຫວ່າງເທີມສາມເດືອນນັ້ນ. ເລີ້ມຕົ້ນຕັ້ງແຕ່ເດືອນແຈນຢູຣີ 1, 2022, ທ່ານຈະເກັບເອົາຄ່າທຳນຽມຈາກພະນັກງານຂອງທ່ານແບບດຽວກັບທີ່ທ່ານເຮັດຢູ່ດຽວນີ້ສຳລັບເວລາພັກທີ່ຖືກຈ່າຍເງິນໃຫ້.ນາຍຈ້າງຈະບໍ່ຈ່າຍຈັກສ່ວນຂອງເງິນແບ່ງບໍຣິຈາກອັນນີ້ໃຫ້ພະນັກງານຂອງເຂົາເຈົ້າ.

**ບໍ່ມີບັນຊີເງິນເດືອນ? ບໍ່ຕ້ອງລາຍງານ.** ທ່ານບໍ່ຕ້ອງໄດ້ຍື່ນໃບລາຍງານສຳລັບເທີມສາມເດືອນທີ່ພະນັກງານຂອງທ່ານບໍ່ມີຊົ່ວໂມງເຮັດວຽກຫລືເງິນເດືອນ.

**ຕ້ອງການຣາຍຣະອຽດເພີ້ມເຕີມກ່ຽວກັບການລາຍງານບໍ່?** ກວດເບິ່ງ ຣາຍຣະອຽດຊ່ວຍໄດ້ຫລາຍ ອັນນີ້ຈາກ Paid Family and Medical Leave. ການລາຍງານ WA Cares ອັນນີ້ຈະຖືກປະສົມປະສານເຕັມທີ່ເພື່ອຄວາມສະດວກຂອງທ່ານ.

### ການຕິດຕາມນຳການຍົກເວັ້ນຂອງພະນັກງານ

ການຍົກເວັ້ນແມ່ນຖາວອນແລະພະນັກງານຈະບໍ່ເລືອກເຂົ້າຄືນໄດ້ອີກຈັກເທື່ອ,ເຖິງແມ່ນວ່າເຂົາເຈົ້າຈະປ່ຽນວຽກງານກໍຕາມ. ແຕ່ວ່າ,ພະນັກງານບາງຄົນຈະເລືອກເອົາທີ່ຈະຮ້ອງຂໍເອົາການຍົກເວັ້ນໄດ້,ແລະມັນເປັນຄວາມຮັບຜິດຊອບຂອງເຂົາເຈົ້າທີ່ຈະຮ້ອງຂໍເອົາເປັນສ່ວນບຸກຄົນ.ຖ້າຖືກອະນຸມັດ,ເຂົາເຈົ້າຈະຕ້ອງໄດ້ຮັບຜິດຊອບອີກຄືກັນສຳລັບການແຈ້ງບອກທ່ານແລະເອົາໃຫ້ທ່ານໃບໂກປີຂອງໜັງສືອະນຸມັດຂອງເຂົາເຈົ້າຈາກ Employment Security Department (ESD).

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

**ເມື່ອຖືກແຈ້ງບອກແລ້ວ,ນາຍຈ້າງຕ້ອງບໍ່ຫັກເອົາຄ່າທຳນຽມ WA Cares ຈາກພະນັກງານຜູ້ທີ່ເອົາຫນັງສືອະນຸມັດການຍົກເວັ້ນ ESD ໃຫ້ເບິ່ງ.** ນາຍຈ້າງຍັງຈະຕ້ອງໄດ້ເກັບຮັກສາໂກປີຂອງຫນັງສືອະນຸມັດຂອງພະນັກງານຂອງເຂົາເຈົ້າໄວ້ຢູ່ໃນສຳນວນເອກສານ. [ຮຽນຮູ້ເພີ່ມເຕີມກ່ຽວກັບການຍົກເວັ້ນ.]()

## ການດຳເນີນປະກັນພັຍການປິ່ນປົວຣະຍະຍາວຕໍ່ໄປ

ທ່ານຍັງຈະມີທາງເລືອກທີ່ຈະສະເນີໃຫ້ປະກັນພັຍການປິ່ນປົວຣະຍະຍາວເອກຊົນໃຫ້ພະນັກງານຂອງທ່ານແຕ່ວ່າມັນເປັນຄວາມຮັບຜິດຊອບຂອງເຂົາເຈົ້າທີ່ຈະຕັດສິນໃຈວ່າຈະຮ້ອງຂໍເອົາການຍົກເວັ້ນຫລືບໍ່. **ທ່ານບໍ່ສາມາດຮ້ອງຂໍເອົາການຍົກເວັ້ນໃນນາມຂອງພະນັກງານຂອງທ່ານ.**

---

## ຮຽນຮູ້ເພີ່ມເຕີມ

## ກວດເບິ່ງເຄື່ອງມືສຳລັບນາຍຈ້າງຂອງພວກເຮົາ

ມັນມີຫລາຍສິ່ງຫລາຍຢ່າງທີ່ຈະຮູ້ຈັກກ່ຽວກັບ WA Cares, ແລະພວກເຮົາມຸ່ງຫມັ້ນຕໍ່ການເຮັດໃຫ້ປະສົບປະການຂອງທ່ານໃຫ້ງ່າຍໆເທົ່າທີ່ຈະເປັນໄປໄດ້ພ້ອມທັງຣາຍຣະອຽດແລະແຫລ່ງຊ່ວຍເຫລືອທີ່ຊ່ວຍໄດ້ຫລາຍ.

*[ເຄື່ອງມືສຳລັບນາຍຈ້າງ]()*

## ຈົດຊື່ສຳລັບຫນັງສືຂ່າວສຳລັບນາຍຈ້າງຂອງພວກເຮົາ

ການເວົ້າເຖິງຣາຍຣະອຽດກ່ຽວກັບ WA Cares ຄວນຈະເປັນງ່າຍໆ.ເພາະສະນັ້ນແລ້ວພວກເຮົາຈຶ່ງມຸ່ງຫມັ້ນຕໍ່ການຮັກສາໃຫ້ທ່ານຢູ່ໃນວົງລ້ອມ.ກວດເບິ່ງຫນັງສືຂ່າວສຳລັບນາຍຈ້າງຂອງພວກເຮົາສຳລັບຂ່າວຄືບຫນ້າຂອງ WA Cares.

## ຕ້ອງການຣາຍຣະອຽດເພີ້ມເຕີມບໍ່?

ອີເມລ໌ໄປທີ່ [wacaresfund@dshs.wa.gov]() ແລະສະມາຊິກຂອງທີມງານຂອງພວກເຮົາຢູ່ກົມ Employment Security Department ຈະຕິດຕາມນຳທ່ານ.

**ຂ່າວດີ!** ພວກເຮົາຈະພ້ອມແລ້ວທີ່ຈະຕອບຄຳຖາມຂອງທ່ານໂດຍທາງໂທຣະສັບໃນປາຍຣະດູຮ້ອນ.ພວກເຮົາຈະດັດແປງຫນ້ານີ້ໃຫມ່ເມື່ອເວລາການບໍຣິການທາງໂທຣະສັບຈະມີໄວ້ຮັບໃຊ້.

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
[Neve]() | ຖືກແລ່ນພະລັງໂດຍ [WordPress]()

**ຈົດຊື່ເຂົ້າຮ່ວມໃນລາຍຊື່ສົ່ງຂ່າວຂອງພວກເຮົາ | http://www.wacaresfund.wa.gov/join-our-mailing-list/**

---

ເພື່ອຈະຈົດຊື່ສຳລັບຂ່າວຄືບໜ້າຫລືເພື່ອຈະເຂົ້າຫາຄວາມຊອບໃຈຂອງຜູ້ຈອງຂອງທ່ານ,ກະຣຸນາຕື່ມຣາຍຣະອຽດການຕິດຕໍ່ຢູ່ຂ້າງລຸ່ມນີ້.

1. *ທີ່ຢູ່ອີເມລ໌

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

## ຮຽນຮູ້ເພີ້ມຕືມ | **http://www.wacaresfund.wa.gov/learn-more/**

---

### ແວບບິນາສິດ

ເຂົ້າຮ່ວມນຳແວບບິນາສິດເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບ WA Cares Fund ແລະຕອບຄຳຖາມຂອງທ່ານ.ການຈົດຊື່ລ່ວງໜ້າເພື່ອຈະເຂົ້າຮ່ວມແມ່ນບໍ່ຕ້ອງການ.

ທ່ານຈະເຂົ້າຮ່ວມໃນແວບບິນາເວລາໃດກໍໄດ້ໂດຍການເຂົ້າຫາລິງ໌ຂ້າງລຸ່ມນີ້ແລະຕືຣາຍຣະອຽດຂອງການປະຊຸມຕໍ່ລົງໄປນີ້:

- ການປະຊຸມ ID: 815 0646 1779
- ຣະຫັດຜ່ານ: 547656

| ຈູນລາຍ 2021 | ອໍກັສ 2021 |
|---|---|
| ຈູນລາຍ 8 \| 12pm-1pm | ອໍກັສ 5 \| 12pm-1pm |
| ຈູນລາຍ 15 \| 5pm-6pm | ອໍກັສ 12 \| 5pm-6pm |
| ຈູນລາຍ 22 \| 12pm-1pm | ອໍກັສ 19 \| 12pm-1pm |
| ຈູນລາຍ 29 \| 5pm-6pm | ອໍກັສ 26 \| 5pm-6pm |

---

### ຄຳຖາມທີ່ຖືກຖາມກັນຢູ່ເລື້ອຍໆ

### ສະວັດດີການທີ່ຖືກເອື້ອເຟື້ອໃຫ້ແລະຄວາມຕ້ອງການໃນການປິ່ນປົວ

### ມັນມີຂອບເຂດປະຈຳວັນໃສ່ສະວັດດີການ WA Cares Fund ບໍ່?

WA Cares Fund ເປັນສະວັດດີການທີ່ປັບໂຕໄດ້ທີ່ທ່ານສາມາດໃຊ້ໄດ້ເພື່ອຈະຕອບສະນອງຄວາມຕ້ອງການດ້ານການປິ່ນປົວຂອງທ່ານສູງເຖີງ $36,500 ໂດຍບໍ່ມີຂອບເຂດປະຈຳວັນ.

### ການບໍຣິການແນວໃດແດ່ທີ່ WA Cares Fund ຈະເອົາໃຫ້?

WA Cares Fund ຈະຈ່າຍສຳລັບການປິ່ນປົວທີ່ທ່ານຕ້ອງການ,ບໍ່ກ່ຽວວ່າມັນຈະແມ່ນຢູ່ໃນເຮືອນຫລືຢູ່ສະຖານທີ່ປິ່ນປົວ. ທ່ານສາມາດຈ້າງເອົາຜູ້ຊ່ວຍເບີ່ງແຍງດູແລຢູ່ເຮືອນແລະຈ່າຍເງີນໃຫ້ສະມາຊິກຄອບຄົວທີ່ມີຄຸນນະວຸດທິ (ລວມທັງຜົວເມັຽ) ເພື່ອຈະໃຫ້ການເບີ່ງແຍງດູແລ.ທ່ານສາມາດໃຊ້ເງີນຢ່າງປັບແປງໄດ້ເພື່ອຈະເຣັດການດັດແປງຮູບຮ່າງໃນເຮືອນເພື່ອວ່າທ່ານສາມາດຍົກຍ້າຍໄປມາໄດ້ດີກວ່າເກົ່າ,ຊື້ເອົາການຕືຣາຄາເບີ່ງຄວາມປອດພັຍໃນເຮືອນເພື່ອວ່າທ່ານຈະສາມາດຫລີກເວັ້ນການລົ້ມລົງທີ່ຫລີກເວັ້ນໄດ້,ແລະໄດ້ຄາບອາຫານສົ່ງໃຫ້ຢູ່ໜ້າປະຕູເຮືອນຂອງທ່ານ.ທ່ານສາມາດຊື້ເອົາອຸບປະກອນ,ເຄື່ອງຊ່ວຍເຫລືອ,ການເຕືອນໃຈໃຫ້ກິນຢາ,ແລະຍານພາຫານະຂົນສົ່ງໄປຫາທ່ານຫມໍ.ຖ້າຫາກວ່າທ່ານຖືກອູ້ມຊູຊ່ວຍເຫລືອໂດຍຜູ້ເບີ່ງແຍງດູແລຈາກຄອບຄົວທີ່ບໍ່ຖືກຈ່າຍເງີນໃຫ້,ທ່ານສາມາດຈ້າງເອົາຜູ້ຊ່ວຍເບີ່ງແຍງດູແລຢູ່ເຮືອນເພື່ອຈະໃຫ້ເວລາພັກຜ່ອນໃຫ້ເຂົາເຈົ້າຫລືໃຫ້ສະມາຊິກຄອບຄົວຂອງທ່ານການຝຶກຝົນທີ່ເຂົາເຈົ້າຕ້ອງການເພື່ອຈະຮູ້ສຶກວ່າຖືກອູ້ມຊູ.ສິ່ງເຫລົ່ານີ້ເປັນພຽງແຕ່ບາງສ່ວນຂອງ

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

ການບໍລິການທີ່ WA Cares Fund ຈະເອື້ອເຟື້ອໃຫ້.ແນວອື່ນໆລວມເອົາການອູ້ມຊູຄວາມຊົງຈໍາ,ການປ້ອງກັນຄວາມຈື່ຈໍາ, ການໂອນການເບິ່ງແຍງດູແລ,ລະບົບຕອບໂຕ້ຍາມສຸກເສີນສ່ວນຕົວ,ແລະຢ່າງອື່ນໆຫລາຍຢ່າງອີກ.

## ໂດຍທົ່ວໄປແລ້ວ $36,500 ຈະກຸ້ມໄດ້ດົນປານໃດ?

ການເບິ່ງແຍງດູແລຊາວຊົ່ວໂມງຕໍ່ອາທິດສໍາລັບປີນຶ່ງຈະຕົກເປັນຣາຄາປະມານ $32,000 ຢູ່ໃນຣັດວໍຊິງຕັນ.ລູກຄ້າຂອງການປິ່ນປົວຣະຍະຍາວຂອງ DSHS ທົ່ວໄປຈະໃຊ້ເວລາ 96 ຊົ່ວໂມງຕໍ່ເດືອນ. WA Cares Fund ສາມາດໃຫ້ການຜ່ອນຄາຍດ້ານການເງິນທັງຫມົດສໍາລັບຄອບຄົວຜູ້ທີ່ຈ່າຍເງິນຈາກຖົງຂອງຕົນເອງສໍາລັບການປິ່ນປົວຣະຍະຍາວຢູ່ໃນເຮືອນສໍາລັບນຶ່ງປີເຕັມແລະການຜ່ອນຄາຍອັນຍິ່ງໃຫຍ່ສໍາລັບບຸກຄົນຜູ້ທີ່ຮັບເອົາການເບິ່ງແຍງດູແລຢູ່ໃນສະພາບແວດລ້ອມຂອງບ່ອນຢູ່ອາສັຍ.ໂດຍອີງຕາມ AARP, 48% ຂອງບຸກຄົນຜູ້ທີ່ຕ້ອງການການປິ່ນປົວຣະຍະຍາວຈະຕ້ອງການມັນສໍາລັບນຶ່ງປີຫລືຫນ້ອຍກວ່າເທົ່ານັ້ນ.

## ກົນຈະຕັດສິນໃຈວ່າຂ້ອຍຈະມີຄວາມຕ້ອງການການປິ່ນປົວຣະຍະຍາວໄດ້ແນວໃດ?

DSHS ຈະຖາມທ່ານຄໍາຖາມກ່ຽວກັບກິຈກັມຂອງການດໍາຣົງຊີວິດຂອງທ່ານແລະການອູ້ມຊູທີ່ທ່ານຕ້ອງການ.ຖ້າຫາກວ່າທ່ານຕ້ອງການຄວາມຊ່ວຍເຫລືອນໍາຢ່າງຫນ້ອຍກິຈກັມຂອງການດໍາຣົງຊີວິດປະຈໍາວັນສາມຢ່າງ,ທ່ານມີເງື່ອນໄຂໄດ້ຮັບສະວັດດີການ. ອັນນີ້ອາດຈະຖືກອີງໃສ່ການລາຍງານໂດຍຕົນເອງແລະສາມາດຖືກພິສູດໄດ້ໂດຍຜູ້ຊ່ຽວຊານການພະຍາບານ.ຊະນິດຂອງກິຈກັມທີ່ DSHS ຈະຖາມທ່ານແມ່ນກ່ຽວກັບການກິນ,ການອາບນ້ໍາ,ການຍ່າງ,ຫລືການຍົກຍ້າຍໄປມາຢູ່ຕັ່ງນັ່ງລໍ້ຊຸກ,ການນຸ່ງເຄື່ອງ,ການເຂົ້າແລະອອກຈາກຕັ່ງນັ່ງແລະຄວາມສາມາດຂອງທ່ານທີ່ຈະເຄື່ອນໄຫວໄປມາເມື່ອເວລາທ່ານຢູ່ເທິງຕຽງນອນ,ການໃຊ້ຫ້ອງນ້ໍາ, ການຄວບຄຸມນໍາຢາ,ການອະນາມັຍສ່ວນຕົວ,ແລະການປ້ອງກັນຮ່າງກາຍ. DSHS ຍັງຈະຖາມກ່ຽວກັບການຮັບຮູ້ແລະຄວາມບໍ່ສົມບູນນໍາຄວາມຊົງຈໍາ/ການຮັບຮູ້ຕ່າງໆທີ່ສະທ້ອນເຖິງຊີວິດປະຈໍາວັນຂອງທ່ານ.ເມື່ອໃດທ່ານໄດ້ຖືກພົບວ່າມີເງື່ອນໄຂໄດ້ຮັບແລ້ວ, ທ່ານຈະມີການເຂົ້າເຖິງສະວັດດີການຕະລອດຊີວິດ $36,500 ເພື່ອຈະໃຊ້ຢ່າງສະບາຍເພື່ອຈະແກ້ໄຂຄວາມຕ້ອງການຂອງທ່ານ.

---

## <u>ຣາຍລະອຽດກ່ຽວກັບນາຍຈ້າງ</u>

## ນະໂຍບາຍປະກັນພັຍການປິ່ນປົວຣະຍະຍາວມີສິດໃນການຍົກເວັ້ນມີຫຍັງແດ່?

Office of the Insurance Commissioner (OIC) ມີ [ກົດເກນທີ່ຖືກຕີຄວາມຫມາຍຊັດເຈນ] ຊຶ່ງນະໂຍບາຍເອກຊົນຕ້ອງສອດຄ່ອງນໍາເພື່ອຈະມີສິດ.

## ຂ້ອຍຈະຮູ້ຈັກໄດ້ແນວໃດຖ້າຫາກວ່າພະນັກງານຂອງຂ້ອຍຄົນໃດຄົນນຶ່ງໄດ້ຖືກຍົກເວັ້ນ?

ພະນັກງານຕ້ອງໄດ້ແຈ້ງບອກແລະເອົາໃຫ້ທ່ານໃບໂກປີຂອງຫນັງສືການຍົກເວັ້ນທີ່ຖືກອະນຸມັດແລ້ວຂອງເຂົາເຈົ້າຈາກ Employment Security Department.

## ບໍຣິສັດຂອງພວກເຮົາເອົາປະກັນພັຍການປິ່ນປົວຣະຍະຍາວໃຫ້ພະນັກງານຂອງພວກເຮົາ.ພວກເຮົາສາມາດຮ້ອງຂໍເອົາການຍົກເວັ້ນໄດ້ບໍ່ໃນນາມຂອງພະນັກງານຂອງພວກເຮົາ?

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະຫງວນ
Neve | ຖືກແລ່ນພະລັງໂດຍ WordPress

ບໍ່ໄດ້. ພະນັກງານຈະໄດ້ເລືອກເອົາວ່າເຂົາເຈົ້າຕ້ອງການການຍົກເວັ້ນຫລືບໍ່ຈາກການຄຸ້ມກັນ WA Cares, ຫລືຖ້າຫາກວ່າເຂົາເຈົ້າຕ້ອງການປາກຈະໃຊ້ WA Cares ເພື່ອຈະເພີ້ມເຕີມສະວັດດີການທີ່ທ່ານກຳລັງສະເນີເອື້ອເຟື້ອໃຫ້ແລ້ວ.ຖ້າຫາກວ່າເຂົາເຈົ້າເລືອກເອົາທີ່ຈະຮ້ອງຂໍເອົາການຍົກເວັ້ນ,ເຂົາເຈົ້າຈະຕ້ອງໄດ້ເຮັດເອງໂດຍເຂົາເຈົ້າເອງ.

### ຂ້ອຍສາມາດຈ່າຍຄ່າຂອງຄ່າທຳນຽມຂອງພະນັກງານຂອງຂ້ອຍໄດ້ບໍ່?

ໄດ້. ທ່ານມີທາງເລືອກທີ່ຈະຈ່າຍຄ່າທຳນຽມ WA Cares ໃນນາມຂອງພະນັກງານຂອງທ່ານໄດ້.

### ພວກເຮົາຕ້ອງໄດ້ເກັບເອົາເງິນຄ່າທຳນຽມສຳລັບພະນັກງານຜູ້ທີ່ບໍ່ໄດ້ອາສັຍຢູ່ໃນຣັດວໍຊິງຕັນບໍ່?

ກິຈການຄ້າຈະຕ້ອງໄດ້ເກັບເອົາຄ່າທຳນຽມ WA Cares ສຳລັບພະນັກງານຜູ້ທີ່ວຽກຂອງເຂົາເຈົ້າຖືກຕັ້ງຢູ່ໃນຫ້ອງຖິ່ນຢູ່ໃນຣັດວໍຊິງຕັນ.ໂດຍທົ່ວໄປແລ້ວ,ທ່ານຈະເກັບເອົາຄ່າທຳນຽມສຳລັບ WA Cares ຈາກພະນັກງານຄົນດຽວກັນຊຶ່ງທ່ານຈ່າຍຄ່າທຳນຽມສຳລັບເວລາພັກສຳລັບຄອບຄົວແລະການພະຍາບານທີ່ຖືກຈ່າຍເງິນໃຫ້.

---

## <u>ການຍົກເວັ້ນ</u>

### ມະໂຍບາຍປະກັນພັຍການປິ່ນປົວຣະຍະຍາວມີສິດໃນການຍົກເວັ້ນມີຫຍັງແດ່?

Office of the Insurance Commissioner (OIC) ມີ [ກົດເກນທີ່ຖືກຕີຄວາມຫມາຍຊັດເຈນ] ຊຶ່ງມະໂຍບາຍເອກຊົນຕ້ອງສອດຄ່ອງນຳເພື່ອຈະມີສິດ.

### ປະກັນພັຍການປິ່ນປົວຣະຍະຍາວທີ່ຖືກສະເນີໃຫ້ໂດຍນາຍຈ້າງຂອງຂ້ອຍຈະເຮັດໃຫ້ຂ້ອຍມີສິດໃນການຍົກເວັ້ນບໍ່?

ບາງທີ. [ມັນຕ້ອງໄດ້ສອດຄ່ອງນຳກົດເກນ,] ຕາມທີ່ຖືກຕີຄວາມຫມາຍໄວ້ໂດຍ Office of the Insurance Commissioner (OIC), ສຳລັບມະໂຍບາຍເອກຊົນເພື່ອຈະມີສິດ. ທ່ານສາມາດຮ້ອງຂໍເອົາການຍົກເວັ້ນໄດ້ຕັ້ງແຕ່ເດືອນອັກໂຕເບີ 1, 2021 ໄປຮອດເດືອນດີເຊັມເບີ 31, 2022. Employment Security Department (ESD) ອາດຈະກວດກາເບິ່ງຄຳຮ້ອງຂໍຂອງທ່ານແລະຂໍເອົາຣາຍຣະອຽດເພີ້ມເຕີມອີກຈາກທ່ານ.

ຫມາຍເຫດ: ທ່ານຈະຈ່າຍແຕ່ຄ່າທຳນຽມ WA Cares Fund ເທົ່ານັ້ນໃນຂະນະທີ່ທ່ານເຮັດວຽກຢູ່—ບໍ່ແມ່ນຫລັງຈາກບັ້ນປາຍ.ປະກັນພັຍການປິ່ນປົວຣະຍະຍາວຂອງເອກຊົນຕາມປົກກະຕິແລ້ວຈະບັ່ງໃຫ້ມີການຈ່າຍເງິນດຳເນີນຕໍ່ໄປ.ຖ້າຫາກວ່າທ່ານບໍ່ປະຕິບັດຕາມຕະລອດ,ມະໂຍບາຍຂອງທ່ານສາມາດຂາດຕອນແລະເຮັດໃຫ້ທ່ານບໍ່ມີການຄຸ້ມກັນ.ບຸກຄົນທີ່ມີການຍົກເວັ້ນທີ່ຖືກອະນຸມັດແລ້ວຈະບໍ່ມີເງື່ອນໄຂໄດ້ຮັບສະວັດດີການ WA Care ຈັກເທື່ອ.

### ເມື່ອໃດຂ້ອຍຕ້ອງມີມະໂຍບາຍປະກັນພັຍການປິ່ນປົວຣະຍະຍາວທີ່ມີສິດເພື່ອຈະມີເງື່ອນໄຂໄດ້ຮັບການຍົກເວັ້ນ?

ທ່ານຕ້ອງໄດ້ຊື້ເອົາມະໂຍບາຍປະກັນພັຍການປິ່ນປົວຣະຍະຍາວທີ່ມີສິດກ່ອນເດືອນໂນເວັມເບີ 1, 2021.
[ອັນນີ້ແມ່ນບາງສິ່ງບາງຢ່າງທີ່ທ່ານອາດຈະຕ້ອງໄດ້ພິຈາຣະນາເບິ່ງ.]

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

### ຂ້ອຍມີພາກສ່ວນເພີ້ມສຳລັບການປິ່ນປົວລະຍະຍາວໃສ່ນະໂຍບາຍປະກັນພັຍຊີວິດຂອງຂ້ອຍ.ອັນນີ້ຈະເຮັດໃຫ້ຂ້ອຍມີສິດໄດ້ຮັບການຍົກເວັ້ນບໍ່?

ບາງທີ. [ກວດເບິ່ງແວບໄຊທ໌ຂອງ Office of the Insurance Commissioner](#) ເພື່ອຈະຮຽນຮູ້ເພີ້ມເຕີມກ່ຽວກັບວ່າແມ່ນຫຍັງຈະເຮັດໃຫ້ມີສິດໃຫ້ເປັນປະກັນພັຍການປິ່ນປົວລະຍະຍາວຢູ່ໃນຣັດວໍຊິງຕັນ.

### ຖ້າຫາກວ່າຂ້ອຍຖືກອະນຸມັດສຳລັບການຍົກເວັ້ນ,ຂ້ອຍຈະຕ້ອງໄດ້ຮ້ອງຂໍໃຫມ່ອີກແຕ່ລະປີບໍ່?

ບໍ່.ເມື່ອຖືກອະນຸມັດແລ້ວ,ທ່ານບໍ່ຕ້ອງໄດ້ຮ້ອງຂໍໃຫມ່.ແຕ່ວ່າຈື່ໄວ້ວ່າ,ການຍົກເວັ້ນຈາກ WA Cares ແມ່ນການຍົກເວັ້ນຕະລອດຊີວິດ.ທ່ານຈະຖືກແຍກອອກຢ່າງຖາວອນຈາກການຄຸ້ມກັນແລະສະວັດດີການ—ເຖິງແມ່ນວ່າບໍຣິສັດປະກັນພັຍເອກຊົນຂອງທ່ານຈະຍົກເລີກນະໂຍບາຍຂອງທ່ານໃນອະນາຄົດກໍຕາມ.ກ່ອນທີ່ຈະຮ້ອງຂໍເອົາການຍົກເວັ້ນ,ໃຫ້ແນ່ໃຈວ່າໂຄງການປະກັນພັຍເອກຊົນຂອງທ່ານຈະຕອບສະນອງຄວາມຕ້ອງການໃນການປິ່ນປົວລະຍະຍາວຂອງທ່ານຕະລອດຊີວິດ.

### ເມື່ອໃດຂ້ອຍຈະສາມາດຮ້ອງຂໍເອົາການຍົກເວັ້ນ?

ຄຳຮ້ອງຂໍເອົາການຍົກເວັ້ນຈະມີໄວ້ໃຫ້ໃນເດືອນອົກໂຕເບີ 2021. ວັນສຸດທ້າຍທີ່ຈະຮ້ອງຂໍເອົາການຍົກເວັ້ນແມ່ນເດືອນທັນວາ 31, 2022.

### ຖ້າຫາກວ່າຂ້ອຍພິດພາດກາຍວັນຕາຍໂຕເພື່ອຈະຮ້ອງຂໍເອົາ,ຂ້ອຍຍັງຈະສາມາດຖືກຍົກເວັ້ນຈາກໂຄງການບໍ່?

ບໍ່. Employment Security Department (ESD) ສາມາດຮັບເອົາຄຳຮ້ອງຂໍສຳລັບການຍົກເວັ້ນເທົ່ານັ້ນຕັ້ງແຕ່ເດືອນອົກໂຕເບີ 1, 2021 ໄປເຖິງເດືອນທັນວາ 31, 2022.

### ຖ້າຫາກວ່າຂ້ອຍຖືກຍົກເວັ້ນ,ຂ້ອຍຈະເຮັດໃຫ້ນາຍຈ້າງຂອງຂ້ອຍຮູ້ຈັກໄດ້ແນວໃດເພື່ອວ່າເຂົາເຈົ້າຈະບໍ່ຖອນເອົາເງິນຄ່າທຳນຽມຈາກເຊັກເບີກເງິນຂອງຂ້ອຍ?

ຫລັງຈາກທີ່ຄຳຮ້ອງຂໍຂອງຂ້ອຍໄດ້ຖືກອະນຸມັດແລ້ວ, Employment Security Department (ESD) ຈະສົ່ງຫນັງສືອະນຸມັດໄປໃຫ້ທ່ານ.ທ່ານຕ້ອງໄດ້ເອົາໂກປີ້ຂອງຫນັງສືອະນຸມັດຂອງທ່ານໃຫ້ນາຍຈ້າງປັດຈຸບັນແລະອະນາຄົດທຸກໆບ່ອນເພື່ອຈະຫລີກເວັ້ນເຮັດໃຫ້ຄ່າທຳນຽມຖືກຖອນເອົາຈາກເງິນເດືອນຂອງຂ້ອຍ. [ຮຽນຮູ້ເພີ້ມເຕີມ](#)

### ຂ້ອຍສາມາດເລືອກເຂົ້າຄືນໃນ WA Cares ໄດ້ບໍ່ຖ້າຫາກວ່າຂ້ອຍເສັຽການຄຸ້ມກັນການປິ່ນປົວລະຍະຍາວເອກຊົນຂອງຂ້ອຍ?

ບໍ່. ການຍົກເວັ້ນແມ່ນຖາວອນ. [ຮຽນຮູ້ເພີ້ມເຕີມ](#)

---

## ຄຳຖາມອື່ນໆ

### ມັນມີມູນຄ່າເງິນສິດບໍ່ຖ້າຫາກວ່າທ່ານບໍ່ໃຊ້ມັນຈັກເທື່ອ?


Copyright © 2021 DSHS – ລິຂະສິດທຸກໆຢ່າງໄດ້ຖືກສະງວນ
[Neve](#) | ຖືກແລ່ນພະລັງໂດຍ [WordPress](#)

WA Cares Fund ເປັນໂຄງການປິ່ນປົວລະຍະຍາວທົ່ວໄປທີ່ທຳງານຄືກັນກັບ Social Security, ຊຶ່ງວ່າພະນັກງານທຸກໆຄົນຈະເຂົ້າຮ່ວມແລະໄດ້ຮັບການຄຸ້ມກັນຕະລອດຊ່ວງວິຊາຊີບຂອງເຂົາເຈົ້າ.ມັນບໍ່ມີທາງເລືອກທີ່ຈະແລກເອົາເງິນຄືນໃນສ່ວນແບ່ງບໍລິຈາກທີ່ທ່ານໄດ້ຈ່າຍຖ້າຫາກວ່າທ່ານບໍ່ໃຊ້ສະວັດດີການ.

## ແມ່ນໃຜເປັນຜູ້ຮັບປະກັນສຳລັບ WA Cares Fund?

WA Cares Fund ເປັນໂຄງການປິ່ນປົວລະຍະຍາວທົ່ວໄປທີ່ທຳງານຄືກັນກັບ Social Security, ຊຶ່ງວ່າພະນັກງານທຸກໆຄົນເຂົ້າຮ່ວມແລະຫາເອົາມາໄດ້ການຄຸ້ມກັນໄດ້ຕະລອດເວລາວິຊາຊີບຂອງເຂົາເຈົ້າ.ໂຄງການອັນນີ້ບໍ່ມີການຮັບປະກັນແລະຖືກໃຫ້ທຶນເຕັມຕົວໂດຍເງິນເດືອນຂອງພະນັກງານທີ່ເຂົ້າກຸ່ມກັນແລະລົງທຶນນຳຣັດວໍຊິງຕັນເພື່ອວ່າຜູ້ມີຜົນປະໂຍດຂອງ WA Cares Fund ຈະໃຊ້ມັນເມື່ອເຂົາເຈົ້າຕ້ອງການການປິ່ນປົວລະຍະຍາວ.

## ພະນັກງານ W-2 ຕາມກົດໝາຍຕ້ອງໄດ້ຖືກຈັດໃສ່ພາສີເງິນເດືອນໃນເດືອນແຈນຢູຣີຂອງປີໜ້າບໍ່?

ການຕີຄວາມໝາຍສຳລັບຜູ້ທີ່ແບ່ງບໍລິຈາກໃສ່ WA Cares Fund (ການບໍລິການແລະການອູ້ມຊູລະຍະຍາວຫລື LTSS) ຢູ່ໃນ RCW 50B.04.010 ອ້າງອີງຄືນໄປໃສ່ການຕີຄວາມໝາຍຂອງໂຄງການເວລາພັກສຳລັບຄອບຄົວແລະການພະຍາບານທີ່ຖືກຈ່າຍເງິນໃຫ້ (PFML) ຢູ່ໃນ RCW 50A.05.010. ອັນນີ້ລວມເອົາການຕີຄວາມໝາຍຂອງ "ວຽກງານ" ຢູ່ໃນ (8). ຖ້າຫາກວ່າຄ່າທຳນຽມບໍ່ໄດ້ຖືກປະເມີນຜົນເບິ່ງສຳລັບໂຄງການ PFML, ມັນຈະບໍ່ຖືກປະເມີນຜົນເບິ່ງສຳລັບ WA Cares Fund.

## ເຄື່ອງມືສຳລັບນາຍຈ້າງ | http://www.wacaresfund.wa.gov/employer-toolkit/

---

## ພວກເຮົາປ້ອງກັນທ່ານ

ມັນມີຫລາຍສິ່ງຫລາຍຢ່າງທີ່ຈະຮູ້ຈັກກ່ຽວກັບ WA Cares, ແລະພວກເຮົາມຸ່ງໝັ້ນຕໍ່ການເຮັດໃຫ້ປະສົບປະການຂອງທ່ານໃຫ້ງ່າຍເທົ່າທີ່ສາມາດເປັນໄປໄດ້ດ້ວຍລາຍລະອຽດແລະແຫລ່ງຊ່ວຍເຫລືອທີ່ຊ່ວຍໄດ້ຫລາຍ.

WA Cares Fund ແລະ WA Cares ເປັນເຄື່ອງໝາຍການບໍລິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress




## ແບ່ງປັນ WA Cares ນຳຊຸມຊົນຂອງທ່ານ

ສົງສັຍຄາໃຈວ່າຈະບອກຂ່າວ WA Cares ໃຫ້ຜູ້ຊົນຂອງທ່ານແນວໃດ? ພວກເຮົາໄດ້ຈັດການເຣື່ອງນີ້ແລ້ວ. ດາວໂຫລດແລະແບ່ງປັນຂ່າວສານປະຈຳເດືອນຂອງພວກເຮົາ ນຳສາຍງານຂອງທ່ານ.ພວກເຮົາຕື່ມຂ່າວສານໃຫມ່ໃສ່ທຸກໆເດືອນ.

## ພິມແຫລ່ງຊ່ວຍເຫລືອ WA Cares

ຕ້ອງການແຫລ່ງຊ່ວຍເຫລືອທີ່ພິມໄດ້ບໍ່? ບໍ່ຕ້ອງຊອກຕໍ່ໄປອີກ! ພວກເຮົາໄດ້ເຮັດໃຫ້ແຫນັ່ນລົງຂ່າວຄືບຫນ້າ WA Cares ທຸກໆຢ່າງຂອງທ່ານມາເປັນເຈັ້ຽໃບດຽວ.ເບິ່ງໃບຂ່າວ.

## ຈົດຊື່ສຳລັບຫນັງສືຂ່າວສຳລັບນາຍຈ້າງຂອງພວກເຮົາ

ການເຂົ້າເຖິງລາຍລະອຽດກ່ຽວກັບ WA Cares ຄວນຈະເປັນງ່າຍໆ.ເພາະສະນັ້ນແລ້ວພວກເຮົາຈຶ່ງມຸ່ງຫມັ້ນຕໍ່ການຮັກສາ ໃຫ້ທ່ານຢູ່ໃນວົງລ້ອມດ້ວຍລາຍລະອຽດແລະແຫລ່ງຊ່ວຍເຫລືອທີ່ມີໄວ້ໃຫ້ທຸກໆຢ່າງ.

ຈອງເປັນສະມາຊິກ

## ຕ້ອງການລາຍລະອຽດເພີ້ມເຕີມບໍ່?

ອີແມລ໌ໄປທີ່ wacaresfund@dshs.wa.gov ແລະສະມາຊິກຂອງທີມງານຂອງພວກເຮົາຢູ່ກົມ Employment Security Department ຈະຕິດຕາມນຳທ່ານ.

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress

**ຂ່າວດີ!** ພວກເຮົາຈະພ້ອມແລ້ວທີ່ຈະຕອບຄຳຖາມຂອງທ່ານໂດຍທາງໂທຣະສັບໃນປາຍຣະດູຮ້ອນ.ພວກເຮົາຈະດັດແປງຫນ້ານີ້ໃຫມ່ເມື່ອເວລາການບໍຣິການທາງໂທຣະສັບຈະມີໄວ້ຮັບໃຊ້.

WA Cares Fund ແລະ WA Cares ເປັນເຄື່ອງຫມາຍການບໍຣິການຂອງ Washington State Department of Social and Health Services.
Copyright © 2021 DSHS – ລິກຂະສິດທຸກໆຢ່າງໄດ້ຖືກສະງວນ
Neve | ຖືກແລ່ນພະລັງໂດຍ WordPress